ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

**ທະນາຄານແຫ່ງ ສປປ ລາວ**

ໜ່ວຍງານຂໍ້ມູນຕ້ານການຟອກເງິນ

ເລກທີ: 114 /ໜຕຟງ

ນະຄອນຫລວງວຽງຈັນ, ວັນທີ 04 ພຶດສະພາ 2009

# ແຈ້ງການ

**ເຖິງ:** ທ່ານຜູ້ອຳນວຍການທະນາຄານທຸລະກິດລັດ, ລັດຫຸ້ນສ່ວນ, ເອກະຊົນ, ແລະ ສາຂາຕ່າງປະເທດ.

**ເລື່ອງ:** ການສ້າງລະບຽບພາຍໃນ ແລະ ແຜນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ.

- **ອີງຕາມຄຳແນະນຳຜູ້ວ່າການທະນາຄານແຫ່ງ ສປປ ລາວ ກ່ຽວກັບຂັ້ນຕອນການຄຸ້ມຄອງການດຳເນີນງານເພື່ອຕ້ານການຟອກເງິນຂອງສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 02/ທຫລ ລົງວັນທີ 16 ກັນຍາ 2008.**

ເພື່ອຈັດຕັ້ງປະຕິບັດຄຳແນະນຳຜູ້ວ່າການທະນາຄານແຫ່ງ ສປປ ລາວ ສະບັບເລກທີ 02/ທຫລ ລົງວັນທີ 16 ກັນຍາ 2008 ຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ໜ່ວຍງານຂໍ້ມູນຕ້ານການຟອກເງິນ ຂໍແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດບັນຫາຂ້າງລຸ່ມນີ້:

1. ສ້າງນະໂຍບາຍພາຍໃນກ່ຽວກັບການຕ້ານການຟອກເງິນ;
   (Policy on AML)

2. ສ້າງລະບຽບຂັ້ນຕອນ ເພື່ອຄວບຄຸມການດຳເນີນງານເພື່ອຕ້ານການຟອກເງິນ;
   (Guideline/Rule on AML Procedures, and Operational Controls)

3. ສ້າງແຜນການຝຶກອົບຮົມພາຍໃນປະຈຳປີ ກ່ຽວກັບວຽກງານຕ້ານການຟອກເງິນ;
   (Annual Training Program on AML)

ບັນດາເອກະສານ ທີ່ໄດ້ກ່າວໄວ້ຢູ່ຂ້າງເທິງນີ້ ຕ້ອງໄດ້ຖືກກະກຽມໃຫ້ສຳເລັດ ແລະ ຮັບຮອງໂດຍສະພາບໍລິຫານຂອງທະນາຄານທ່ານ ແລ້ວນຳສົ່ງມາໃຫ້ໜ່ວຍງານຂໍ້ມູນຕ້ານການຟອກເງິນ ພາຍໃນໄລຍະເວລາ 90 ວັນລັດຖະການ ນັບແຕ່ມື້ທີ່ໄດ້ອອກແຈ້ງການສະບັບນີ້.

ໃນແຕ່ລະປີ, ບັນດາເອກະສານດັ່ງກ່າວ ຕ້ອງມີການປັບປຸງໃຫ້ທັນກັບສະພາບການ ແລະ ຫລັງຈາກນັ້ນ ຕ້ອງໄດ້ສຳເນົາ ແລະ ນຳສົ່ງມາໃຫ້ໜ່ວຍງານຂໍ້ມູນຕ້ານການຟອກເງິນ ບໍ່ໃຫ້ກາຍວັນທີ 30 ທັນວາຂອງທຸກໆປີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຄັ່ງຄັດ.

**ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ,**

ເລື່ອນ ວົງພຣະນະຄອນ

ບ່ອນນຳສົ່ງ:

- ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທຫລ (ເພື່ອຊາບ ແລະ ຊ່ວຍຊຸກຍູ້ໃນການຈັດຕັ້ງປະຕິບັດ)